ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຜູ້ວ່າການ ທຫລ ຕ້ອນຮັບການເຂົ້າຢ້ຽມຢາມຂອງ ຄະນະຜູ້ບໍລິຫານ ຂອງທະນາຄານ ກະສິກຳ ແຫ່ງຊາດຈີນ ສາຂາ ຢູນນານ



ໃນວັນທີ 12 ກັນຍາ 2023 ນີ້, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ຄະນະຜູ້ບໍລິຫານ ຂອງທະນາຄານ ກະສິກຳ ແຫ່ງຊາດຈີນ ສາຂາ ຢູນນານ ຊຶ່ງນຳໂດຍ ທ່ານ **Xiu Xiayu** ເລຂາຄະນະພັກຮາກຖານ, ຫົວໜ້າ ທະນະຄານກາສິກຳ ແຫ່ງຊາດຈີນ ສາຂາ ແຂວງຢູນນານ.



ຈຸດປະສົງຂອງການເຂົ້າມາຢ້ຽມຢາມໃນຄັ້ງນີ້, ກໍ່ເພື່ອປຶກສາຫາລືຮ່ວມກັນ ກ່ຽວກັບໂອກາດໃນການຮ່ວມມືລະຫວ່າງສອງຝ່າຍ ໂດຍສະເພາະໃນຂົງເຂດການຄ້າ-ການລົງທຶນ ແລະ ການເງິນ-ການທະນາຄານ. ຊຶ່ງທະນາຄານ

ກະສິກຳ ແຫ່ງຊາດຈີນ (**Agricultural Bank Of China**) ເປັນທະນາຄານທຸລະກິດລັດຂະໜາດໃຫຍ່ລະດັບແຖວໜ້າຂອງ ສປ ຈີນ ມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫຼວງປັກກິ່ງ. ທະນາຄານດັ່ງກ່າວ ເປັນສ່ວນໜຶ່ງທີ່ສຳຄັນຂອງລະບົບການເງິນຂອງ ສປ ຈີນ ສາມາດສະໜອງການບໍລິການທີ່ຫຼາກຫຼາຍ ແລະ ຍັງດຳເນີນທຸລະກິດຕະຫຼາດການເງິນ ແລະ ທຸລະກິດການຄຸ້ມຄອງຊັບສິນ, ຂອບເຂດຂອງທຸລະກິດຍັງກວມເອົາທະນາຄານການລົງທຶນ, ການຄຸ້ມຄອງກອງທຶນ, ການເຊົ່າທາງດ້ານການເງິນ, ການປະກັນໄພຊີວິດ ແລະ ອື່ນໆ.



ໃນໂອກາດດັ່ງກ່າວ, ທາງຄະນະຜູ້ບໍລິຫານ ຂອງທະນາຄານກະສິກຳ ແຫ່ງຊາດຈີນ ສາຂາແຂວງຢູນນານ ໄດ້ລາຍງານໃຫ້ທ່ານ ຜູ້ວ່າການ ທຫລ ຊາບວ່າ: ທາງທະນາຄານ ມີຄວາມສົນໃຈໃນການຍົກລະດັບການຮ່ວມມືສອງຝ່າຍ ລາວ-ຈີນ ຜ່ານການຮ່ວມມືສົ່ງເສີມການຊຳລະສະສາງເປັນສະກຸນເງິນທ້ອງຖິ່ນ ເພື່ອຍົກລະດັບການຄ້າ ແລະ ການລົງທຶນຂອງທັງສອງຝ່າຍໃຫ້ເພີ່ມພູນຍິ່ງຂຶ້ນ. ໃນໂອກາດນີ້, ທ່ານຜູ້ວ່າການ ທຫລ ກໍ່ໄດ້ສະແດງຄວາມຂອບໃຈຕໍ່ຄະນະພັກ, ຄະນະນຳຂອງທະນາຄານກະສິກຳ ແຫ່ງຊາດຈີນ ທີ່ໄດ້ຖືສຳຄັນຕໍ່ກັບການຮ່ວມມື ແລະ ສາຍພົວພັນອັນດີງາມລະຫວ່າງ ສອງຊາດ ລາວ-ຈີນ ແລະ ພ້ອມທີ່ຈະໃຫ້ການສະໜັບສະໜູນ ແລະ ຮ່ວມມືຕໍ່ກັບທະນາຄານດັ່ງກ່າວ.

ຂ່າວ-ພາບ: ຫ້ອງການ

*ຢູ່ເມືອງລາວໃຊ້ເງິນກີບລາວ*